# “ທີມເຮືອມັງກອນແມ່ຍິງ” ທີ່ສະແຫວງຫາຄວາມຝັນຂອງຕົນ



ໃນໄລຍະຈັດງານກິລາໂອລິມປິກປາຣີ, ເຮືອມັງກອນປະເພດແຂ່ງຂັນຂອງຈີນໄດ້ເຂົ້າຮ່ວມລາຍການສະແດງຢູ່ຕາມແມ່ນ້ຳ Marne ເຊິ່ງໄດ້ສະແດງໃຫ້ເຫັນເຖິງມົນສະເໜ່ແຫ່ງກິລາພື້ນເມືອງຂອງຈີນຕໍ່ຜູ້ຊົມທົ່ວໂລກ. ນ້ຳໃຈໂອລິມປິກ ແລະ ວັດທະນະທຳເຮືອມັງກອນຂອງຈີນ ບໍ່ພຽງແຕ່ໄດ້ສະແດງອອກໃນສະໜາມແຂ່ງຂັນຂອງນັກກິລາມືອາຊີບເທົ່ານັ້ນ, ຫາກຍັງໄດ້ສິ່ງແສງສະຫວ່າງແຫ່ງຄວາມຝັນດ້ານກິລາໃຫ້ແກ່ໝົດທຸກຄົນອີກດ້ວຍ.

ຢູ່ແຂວງກວາງຕຸ້ງ, ແຂວງຝູຈ້ຽນ, ແຂວງເຈີ້ຈຽງ ແລະ ເຂດແຂວງອື່ນໆຂອງຈີນ ມີ “ທີມເຮືອມັງກອນແມ່ຍິງ”, ພາຍຫຼັງສຳເລັດວຽກບ້ານການເຮືອນແລ້ວ, ພວກເຂົາເຈົ້າໄດ້ພາຍເຮືອມັງກອນແບບອົງອາດກ້າຫານ ເພື່ອສະແຫວງຫາຄວາມຝັນຂອງຕົນ ແລະ ກໍເພື່ອຄວາມຮັກຫອມຕໍ່ຊີວິດ.

## ຍຶດໝັ້ນຍ້ອນຄວາມຮັກ

ນາງ ເຝີງລີຈວນ (Feng Lijuan), ອາຍຸ 54 ປີ, ເປັນແມ່ບ້ານແມ່ເຮືອນທຳມະດາຜູ້ໜຶ່ງຢູ່ໃນຕາແສງຊາຫຼຽນ ນະຄອນຕົງກວານ ແຂວງກວາງຕຸ້ງ ສປ ຈີນ. ລາວ ເຕີບໃຫຍ່ຂຶ້ນມາຢູ່ບ້ານແຄມນ້ຳ, ລາວມັກເຮືອມັງກອນມາແຕ່ນ້ອຍ. ໃນປີ 1996, ທີມເຮືອມັງກອນຍິງໄດ້ຖືກສ້າງຕັ້ງຂຶ້ນຢູ່ໃນຕາແສງຊາຫຼຽນ ແລະ ນາງເຝີງລີຈວນ ກໍສະໝັກເຂົ້າທີມເຮືອມັງກອນໃນທັນທີ.

ໃນກາງລະດູຮ້ອນຂອງປີ 1999, ທີມເຮືອມັງກອນຍິງຊາຫຼຽນ ໄດ້ຕາງໜ້າປະເທດຈີນໄປເຂົ້າຮ່ວມຊ່ວງເຮືອມັງກອນໂລກຄັ້ງທີ 3 ຢູ່ປະເທດອັງກິດ. ເພື່ອກະກຽມເຂົ້າຮ່ວມການແຂ່ງຂັນ, ສະມາຊິກໃນທີມໄດ້ດຳເນີນການຝຶກຊ້ອມຮ່ວມກັນແບບປິດປະຕູ.

ທີມເຮືອມັງກອນໄດ້ຝຶກຊ້ອມທຸກມື້ແບບແຂ່ງແດດແຂ່ງຝົນ, ພາຍເຮືອດົນຈົນມືໂພງ, ຝຶກຊ້ອມແລ້ວໆກັບໄປອາບນ້ຳ, ເມື່ອຍຈົນຂີ້ຄ້ານເວົ້າ.

“ກົ້ມຫົວພາຍເຮືອຈົນສຸດຄວາມສາມາດ”, ຖ້າຍັງປັບຕົວເຂົ້າກັບການແຂ່ງຂັນບໍ່ໄດ້, ກໍຕ້ອງຝຶກຊ້ອມຕື່ມອີກ, ຖ້າອຸປະກອນບໍ່ພ້ອມພຽງ, ກໍພະຍາຍາມຝຶກຊ້ອມຕື່ມອີກເຊັ່ນກັນ. ໃນການຊ່ວງເຮືອຄັ້ງນັ້ນ, ເຮືອມັງກອນຍິງຊາຫຼຽນ ສາມາດຍາດໄດ້ຫຼຽນຄຳໃນ 3 ລາຍການແຂ່ງຂັນ.

ເປັນເວລາຫຼາຍກວ່າ 20 ປີຜ່ານມາ, ນາງ ເຝີງລີຈວນ ແລະ ໝູ່ເພື່ອນຂອງລາວໄດ້ຍຶດໝັ້ນການຝຶກຊ້ອມ, ພ້ອມດຽວກັນນັ້ນ, ກໍໄດ້ຈັດສັນເວລາການຝຶກຊ້ອມ, ເວລາໃຊ້ຊີວິດ ແລະ ເວລາເຮັດວຽກຂອງຕົນໃຫ້ໄດ້ເປັນຢ່າງດີ. ນອກນີ້, ລາວຍັງໄດ້ກາຍເປັນກຳລັງຫຼັກແຫຼ່ງໃນທີມອີກດ້ວຍ. ລາວກ່າວວ່າ: “ການພາຍເຮືອມັງກອນເຮັດໃຫ້ຂ້ອຍມີຄວາມສຸກ ແລະ ມີສຸຂະພາບແຂງແຮງ.”

ທີມເຮືອມັງກອນຍິງທີມນີ້ ຍັງຖືກຄົນທັງຫຼາຍເອີ້ນວ່າ ເປັນ “ທີມເຮືອມັງກອນແມ່ຍິງ”. ໃນຊີວິດປະຈຳວັນ, ພວກເຂົາເຈົ້າຍັງມີໜ້າທີ່ວຽກງານຂອງຕົນ ເຊັ່ນ: ເປັນພະນັກງານອະນາໄມສະຖານທີ່ສາທາລະນະ, ເຈົ້າຂອງຮ້ານອາຫານ, ນັກປຸງແຕ່ງກາເຟ, ເປັນແມ່ເຮືອນ ແລະ ອື່ນໆ. ໃນວັນທຳມະດາ, ພວກເຂົາເຈົ້າຈະຫຍຸ້ງກັບ ວຽກງານ ຫຼື ເບິ່ງແຍງດູແລຄອບຄົວ. ເຖິງວ່າພວກເຂົາເຈົ້າຈະມີອາຍຸຫຼາຍແລ້ວ ແຕ່ອາຍຸຂອງພວກເຂົາບໍ່ໄດ້ເປັນອຸປະສັກ ໃນການເຮັດໜ້າທີ່ສີພາຍຂອງພວກເຂົາ, ຕາບໃດທີ່ສຽງກອງເຮືອມັງກອນດັງຂຶ້ນ, ພວກເຂົາເຈົ້າກໍສາມາດພາຍເຮືອໄດ້ໃນທັນທີ.

ປັດຈຸບັນ, ຕາແສງຊາຫຼຽນມີ 17 ບ້ານ, ທຸກບ້ານຈະມີທີມເຮືອມັງກອນຍິງ. ເດືອນມັງກອນປີ 2000, ຕາແສງຊາຫຼຽນ ໄດ້ຮັບນາມມະຍົດ “ບ້ານເມືອງເຮືອມັງກອນ” ແຫ່ງທຳອິດຂອງຈີນຈາກສະມາຄົມເຮືອມັງກອນຈີນ.

## ມີຄວາມໂດດເດັ່ນຍ້ອນການສືບທອດ

ໃນຊຸມປີຜ່ານມາ, ນ້ຳໃຈເຮືອມັງກອນ ທີ່ຮ່ວມແຮງຮ່ວມໃຈກັນ, ສາມັກຄີ ແລະ ສູ້ຊົນຜ່ານຜ່າ ພ້ອມທັງ ວັດທະນະທຳເຮືອມັງກອນທີ່ເຂັ້ມຂຸ້ນ ໄດ້ດຶງດູດຄົນທັງຫຼາຍ ເຂົ້າຮ່ວມການຊ່ວງເຮືອມັງກອນນັບມື້ນັບຫຼາຍຂຶ້ນ.



ນາງ ຈູເກີເລີຍ (Zhu Ge lei), ສະມາຊິກຂອງທີມເຮືອມັງກອນຍິງນະຄອນຈິ່ນຮວາ ແຂວງເຈີ້ຈຽງ ເປັນພະນັກງານທະນາຄານ, ປີນີ້ອາຍຸ 47 ປີ ເລີ່ມເຂົ້າຮ່ວມເປັນສີພາຍເຮືອມັງກອນໃນປີ 2020.

ນາງ ຈູເກີເລີຍ ເວົ້າວ່າ: ຂ້ອຍໃຊ້ເວລາວ່າງຂອງຕົນໃນການພາຍເຮືອມັງກອນ ແລະ ຄອບຄົວ ກໍໃຫ້ການສະໜັບສະໜູນເປັນຢ່າງດີ ພວກເຂົາເຈົ້າເຊື່ອວ່າການຊ່ວງເຮືອມັງກອນ ແມ່ນປະເພດກິລາວັດທະນະທຳທີ່ມີມູນເຊື້ອຂອງຈີນ, ຕ້ອງການໃຫ້ຄົນຮຸ່ນນີ້ສືບທອດ ແລະ ເສີມຂະຫຍາຍກິລາປະເພດນີ້ຕໍ່ໄປ.

“ມັນທັງມ່ວນທັງສາມາດສືບທອດ ແລະ ເສີມຂະຫຍາຍນ້ຳໃຈເຮືອມັງກອນໄດ້.” ນາງ ໂກໂກ (Guoguo) ອາຍຸ 40 ປີ ແມ່ນສະມາຊິກທີ່ໜຸ່ມນ້ອຍທີ່ສຸດໃນທີມເຮືອມັງກອນຍິງຂອງບ້ານຫຼຽນຜານ ນະຄອນຝູໂຈ່ວ ແຂວງຝູຈ້ຽນ, ລາວໄດ້ເຂົ້າຮ່ວມທີມເຮືອມັງກອນໃນ 4 ປີກ່ອນ, ເຖິງວ່າຈະຕ້ອງແຂ່ງແດດແຂ່ງຝົນທຸກມື້, ແຕ່ເມື່ອເວົ້າເຖິງທີມເຮືອມັງກອນຍິງ, ລາວຈະຮູ້ສຶກມີຄວາມພາກພູມໃຈຫຼາຍ, ນາງເວົ້າວ່າ: “ທີມເຮືອມັງກອນນ້ອຍຢູ່ນະຄອນຝູໂຈ່ວບໍ່ຫຼາຍ ແລະ ພວກເຮົາໄດ້ດຶງດູດສາຍຕາຂອງຄົນທັງຫຼາຍເລື້ອຍໆ.”

ໃນຊຸມປີຜ່ານມາ, ໄວລຸ້ນທີ່ເກີດຊຸມປີ 1990 ແລະ ຫຼັງປີ 2000 ໄດ້ເລີ່ມເຂົ້າຮ່ວມທີມເຮືອມັງກອນຕາມໆກັນ ແລະ ນາງ ຫູລີຊາ, ນັກກິລາຕີກອງຍິງຂອງທີມເຮືອມັງກອນຂອງສະໂມສອນຄາຍຜິງ ສີຫາງ ກວາງຕຸ້ງ ກໍເປັນໄວລຸ້ນທີ່ເກີດຫຼັງປີ 2000.

ນາງ ຫູລີຊາ (Hu Lisa) ເກີດໃນປີ 2003, ເປັນນັກສຶກສາມະຫາວິທະຍາໄລແຫ່ງໜຶ່ງໃນນະຄອນກວາງໂຈ່ວ, ລາວມັກຫຼິ້ນກິລາຕັ້ງແຕ່ນ້ອຍ ແລະ ໄດ້ສຳຜັດກັບການກິລາເຮືອມັງກອນແບບບັງເອີນ ໃນເດືອນພຶດສະພາ 2023, ເລີຍຕິດໃຈນຳກິລາປະເພດນີ້. ຫຼັງຈາກນັ້ນ, ນາງກໍໄດ້ເລີ່ມການຝຶກຊ້ອມພາຍເຮືອມັງກອນແບບມືອາຊີບ.

ຫຼັງຈາກໄດ້ຝຶກຊ້ອມມາເປັນເວລາໜຶ່ງປີແລ້ວ, ນາງ ຫູລີຊາ ກໍຄ່ອຍໆປ່ຽນຈາກການເປັນສີພາຍ ມາເປັນ “ຜູ້ບັງຊາການ” ຄືເປັນມືກອງເຮືອມັງກອນທີ່ດີເດັ່ນ.

ນາງເວົ້າວ່າ: “ພວກເຮົາຈະປຶກສາຫາລືກ່ຽວກັບຈັງຫວະການຕີກອງກ່ອນການແຂ່ງຂັນເພື່ອໃຫ້ທຸກຄົນຮັບຮູ້ເຖິງທຸກຂັ້ນຕອນຂອງການແຂ່ງຂັນ. ສິ່ງທີ່ສຳຄັນທີ່ສຸດແມ່ນການປະສານສົມທົບກັນລະຫວ່າງເພື່ອນຮ່ວມທີມ.” ຕັ້ງແຕ່ວິນາທີທີ່ລາວຈັບໄມ້ຕີກອງຂຶ້ນມາ, ນາງ ຫູລີຊາ ບໍ່ພຽງແຕ່ໄດ້ເປັນມືກອງ ແລະ ໃຫ້ກຳລັງໃຈແກ່ທີມງານເທົ່ານັ້ນ, ຫາກຍັງໄດ້ເປັນຜູ້ສິ່ງຕໍ່ພະລັງຂອງເພດຍິງ ແລະ ສືບທອດພາລະໜ້າທີ່ທີ່ເປັນມືກອງອີກດ້ວຍ.

ນາງ ຫູລີຊາ ກ່າວວ່າ: “ນັກກິລາເຮືອມັງກອນສ່ວນຫຼາຍແມ່ນຜູ້ມີອາຍຸສູງ, ຂ້ອຍຫວັງວ່າຈະສາມາດຈັດການແຂ່ງຂັນເຮືອມັງກອນຫຼາຍກວ່າເກົ່າເພື່ອໃຫ້ຊາວໜຸ່ມຮັບຮູ້ ແລະ ເຂົ້າຮ່ວມການແຂ່ງຂັນແບບນີ້ນັບມື້ນັບຫຼາຍຂຶ້ນ.”

ແຫຼ່ງຂ່າວ: ຂ່າວ CCTV, ສຳນັກຂ່າວສານຊິນຮວາ, ເວັບໄຊປະຊາຊົນ ແລະ ອື່ນໆ; ພາບໂດຍ: ສຳນັກຂ່າວສານຊິນຮວາ

### ອ່ານເພີ່ມເຕີມ

ວັດທະນະທຳເຮືອມັງກອນແມ່ນພາກສ່ວນໜຶ່ງ ທີ່ສຳຄັນຂອງວັດທະນະທຳທີ່ມີມູນເຊື້ອຂອງຈີນ.

ປີ 2011, ການຊ່ວງເຮືອມັງກອນໄດ້ຖືກຈັດເຂົ້າໃນບັນຊີລາຍຊື່ມໍລະດົກວັດທະນະທຳນາມມະທຳແຫ່ງຊາດຊຸດທີ 3 ຂອງຈີນ.

ປີ 1991 ສະຫະພັນເຮືອມັງກອນສາກົນໄດ້ຮັບການສ້າງຕັ້ງຂຶ້ນ, ມາຮອດປີ 2023 ສະມາຊິກຂອງສະຫະພັນດັ່ງກ່າວໄດ້ເພີ່ມຂຶ້ນເປັນ 93 ປະເທດ, ໃນນັ້ນລວມມີປະເທດ ແລະ ເຂດແຄວ້ນໃນ 5 ທະວີບ. ໃນປີ 2021, ການພາຍເຮືອມັງກອນຖືກຈັດເຂົ້າເປັນລາຍການສະແດງໃນງານກິລາໂອລິມປິກໂຕກຽວເປັນຄັ້ງທຳອິດ. ປີນີ້, ການພາຍເຮືອມັງກອນໄດ້ເຂົ້າຮ່ວມງານກິລາໂອລິມປິກປາຣີອີກຄັ້ງໜຶ່ງ ໃນຖານະເປັນລາຍການສະແດງ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com